ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ເລກທີ 0939 / ສຄອຊ

ນະຄອນຫຼວງວຽງຈັນ, ວັນທີ 20 JUL 2022

**ຮຽນ**: ທ່ານ ປະທານ ສະພາການຄ້າ ແລະ ອຸດສະຫາກຳ ເມືອງ, ແຂວງ ແລະ ນະຄອນຫຼວງວຽງຈັນ

ທ່ານ ປະທານ ສະມາຄົມ ແລະ ກຸ່ມທຸລະກິດ

ທ່ານ ຜູ້ອຳນວຍການ ບໍລິສັດ ແລະ ບໍລິສັດທີ່ເປັນສະມາຊິກຂອງ ສຄອ ແຫ່ງຊາດລາວ

**ເລື່ອງ**: ຂໍນຳສົ່ງ ແຈ້ງການແນະນຳກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດສຳລັບຜູ້ອອກແຮງງານຢູ່ໃນ ສປປລາວ

- ອີງຕາມດຳລັດ ເລກທີ 237/ນຍ, ລົງວັນທີ 18/5/2020, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງສະພາການຄ້າ ແລະ ອຸດສະຫາກຳ ແຫ່ງຊາດລາວ.
- ອີງຕາມແຈ້ງການ ຂອງຄະນະກຳມະການແຮງງານແຫ່ງຊາດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບ ເລກທີ2718/ຮສສ, ລົງວັນທີ08/07/2022.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ໃນນາມຕາງໜ້າພາກທຸລະກິດ ແລະ ຕາງໜ້າຜູ້ໃຊ້ແຮງງານ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ປະທານ ສະພາການຄ້າ ແລະ ອຸດສະຫາກຳ ເມືອງ, ແຂວງ ແລະ ນະຄອນຫຼວງວຽງຈັນ, ທ່ານ ປະທານ ສະມາຄົມ ແລະ ກຸ່ມທຸລະກິດ ແລະ ທ່ານ ຜູ້ອຳນວຍການບໍລິສັດ ແລະ ບໍລິສັດທີ່ເປັນສະມາຊິກຂອງ ສຄອ ແຫ່ງຊາດລາວ ຂໍນຳສົ່ງເອກະສານ ແຈ້ງການແນະນຳກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດສຳລັບຜູ້ອອກແຮງງານຢູ່ ໃນ ສປປລາວ ທີ່ເຮັດວຽກຢູ່ໃນຫົວໜ່ວຍການຜະລິດ, ທຸລະກິດ ລວມທັງຜູ້ອອກແຮງງານທີ່ຢູ່ ໃນລະບົບ ແລະ ນອກລະບົບ ໃຫ້ດີຂຶ້ນກວ່າເກົ່າ ໄດ້ຮັບຄ່າຕອບແທນຈາກການເຮັດວຽກທີ່ເໝາະສົມ ແລະ ສາມາດດຳລົງຊີວິດ ກັບສະພາບເສດຖະກິດໃນປະຈຸບັນນີ້; ເຊິ່ງມີລາຍລະອຽດ ແລະ ການປັບຂຶ້ນມີດັ່ງນີ້ :

1. ເຫັນດີໃຫ້ປັບຄັ້ງທີ 1 ຈາກ 1,100,000 ກີບ ມາເປັນ 1,200,000 ກີບ ຕໍ່ຄົນຕໍ່ 1 ເດືອນ, ໂດຍມີຜົນບັງຄັບໃຊ້ແຕ່ ວັນທີ 1 ສິງຫາ 2022 ຫາ 30 ເມສາ 2023.
2. ເຫັນດີໃຫ້ປັບຄັ້ງທີ2 ຈາກ 1,200,000 ກີບ ມາເປັນ 1,300,000 ກີບ ຕໍ່ຄົນ ຕໍ່ 1 ເດືອນ ໂດຍມີຜົນບັງຄັບໃຊ້ ແຕ່ 1ພຶດສະພາ 2023 ເປັນຕົ້ນໄປ.

ເຊິ່ງລາຍລະອຽດຕ່າງໆ ກ່ຽວກັບການປັບຂຶ້ນຄ່າແຮງງານຕ່ຳສຸດ ແມ່ນຢູ່ໃນແຈ້ງການແນະນຳ ເລກທີເລກທີ 2718/ຮສສ, ລົງວັນທີ08/07/2022 ທີ່ຄັດຕິດມາພ້ອມນີ້)

ດັ່ງນັ້ນ, ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຈຶ່ງແຈ້ງມາຍັງທ່ານປະທານ ສະພາການຄ້າ ແລະ ອຸດສະຫາກຳ ເມືອງ, ແຂວງ ແລະ ນະຄອນຫຼວງວຽງຈັນ, ທ່ານ ປະທານ ສະມາຄົມ ແລະ ກຸ່ມທຸລະກິດ ແລະ ທ່ານ ຜູ້ອຳ ນວຍການບໍລິສັດ ແລະ ບໍລິສັດທີ່ເປັນສະມາຊິກຂອງ ສຄອ ແຫ່ງຊາດລາວ ເພື່ອຮັບຊາບ ແລະ ແຈ້ງໃຫ້ສະມາຊິກຂອງທ່ານ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

**ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ**

**ເລຂາທິການ**

**ດາວວະດົງ ພິລະໄຊພິທັກ**

**ຕິດຕໍ່**: ພະແນກ ພັດທະນາຜູ້ປະກອບການ ແລະ ກິດຈະກຳຕາງໜ້າຜູ້ໃຊ້ແຮງງານ,
ໂທ: 02055946471

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2718

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຄະນະກຳມະການແຮງງານແຫ່ງຊາດ

ເລກທີ: 2718 /ຣສສ
ນະຄອນຫຼວງວຽງຈັນ, ວັນທີ: 08 / 07 / 22

# ແຈ້ງການແນະນຳ

## ກ່ຽວກັບການປັບປຸງຄ່າແຮງງານຂັ້ນຕ່ຳສຸດ ສຳລັບຜູ້ອອກແຮງງານ ຢູ່ ສປປ ລາວ

- ອີງຕາມ ດຳລັດວ່າດ້ວຍການຄະນະກຳມະການແຮງງານແຫ່ງຊາດ, ເລກທີ 571/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ແຈ້ງການ ສະບັບເລກທີ 829/ຫສນຍ, ລົງວັນທີ 13 ມິຖຸນາ 2022 ກ່ຽວກັບທິດຊີ້ນຳຕໍ່ກັບການປັບຄ່າແຮງງານຂັ້ນຕ່ຳໃໝ່ ສຳລັບຜູ້ອອກແຮງງານ.

ເພື່ອເປັນການປັບປຸງຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານທີ່ເຮັດວຽກໃນຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ ທັງໃນ ແລະ ນອກລະບົບ ແລະ ຜູ້ເຮັດວຽກໃນຄົວເຮືອນ ໃຫ້ດີຂຶ້ນກວ່າເກົ່າ, ໄດ້ຮັບຄ່າຕອບແທນຈາກການເຮັດວຽກຢ່າງເໝາະສົມ, ຍຸຕິທຳກັບລາຍໄດ້ທີ່ຕົນຄວນຈະໄດ້ຮັບ, ເປັນການເພີ່ມປະສິດທິພາບໃນການຜະລິດໃຫ້ສູງຂຶ້ນ.

ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ປະທານຄະນະກຳມະການແຮງງານແຫ່ງຊາດ ອອກແຈ້ງການແນະນຳ ດັ່ງນີ້:

1. ການປັບປຸງຄ່າແຮງງານຂັ້ນຕ່ຳສຸດສຳລັບຜູ້ອອກແຮງງານ ຢູ່ ສປປ ລາວ ໃຫ້ປະຕິບັດ ດັ່ງນີ້:
   1) ຄັ້ງທີ 1 ປັບຂຶ້ນຈາກ 1.100.000 ກີບ ມາເປັນ 1.200.000 ກີບ ຕໍ່ຄົນຕໍ່ເດືອນ ຫຼື ເທົ່າກັບ 46.154 ກີບ ຕໍ່ຄົນຕໍ່ວັນ ຫຼື ເທົ່າກັບ 5.769 ກີບ ຕໍ່ຄົນຕໍ່ຊົ່ວໂມງ ໂດຍມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ສິງຫາ 2022 ຫາ 30 ເມສາ 2023;
   2) ຄັ້ງທີ 2 ປັບຂຶ້ນຈາກ 1.200.000 ກີບ ມາເປັນ 1.300.000 ກີບ ຕໍ່ຄົນຕໍ່ເດືອນ ຫຼື ເທົ່າກັບ 50.000 ກີບ ຕໍ່ຄົນຕໍ່ວັນ ຫຼື ເທົ່າກັບ 6.250 ກີບ ຕໍ່ຄົນຕໍ່ຊົ່ວໂມງ ໂດຍມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ພຶດສະພາ 2023 ເປັນຕົ້ນໄປ.
2. ເປົ້າໝາຍຜູ້ທີ່ຈະໄດ້ຮັບຄ່າແຮງງານຂັ້ນຕ່ຳສຸດແມ່ນ ຜູ້ອອກແຮງງານ ທີ່ເຮັດວຽກໃນຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການຂອງທຸກພາກສ່ວນເສດຖະກິດ-ສັງຄົມ, ຜູ້ເຮັດວຽກນອກລະບົບ ແລະ ໃນຄົວເຮືອນ ທີ່ບໍ່ມີວຸດທິທາງວິຊາຊີບ, ບໍ່ມີສີມື, ບໍ່ມີຄວາມຊຳນານງານ ແລະ ບໍ່ມີໃບຢັ້ງຢືນຜ່ານງານ ຊຶ່ງເຮັດວຽກບໍ່ເກີນ ຊາວຫົກ ວັນຕໍ່ເດືອນ, ຫົກວັນຕໍ່ອາທິດ ແລະ ແປດ ຊົ່ວໂມງຕໍ່ວັນ ໂດຍບໍ່ລວມເອົາເງິນເຮັດວຽກເພີ່ມໂມງ,

ເງິນບໍາເນັດ, ເງິນອຸດໜູນປີການ, ເງິນຊຸກຍູ້ມາເຮັດວຽກ, ເງິນຄ່າອາຫານ, ຄ່າທີ່ພັກ, ຄ່າຮັບສົ່ງ ແລະ ເງິນນະໂຍບາຍອື່ນ ທີ່ເປັນສະຫວັດດີການຂອງຫົວໜ່ວຍແຮງງານ;

3. ສໍາລັບຜູ້ອອກແຮງງານທີ່ມີປະສົບການ, ມີວິຊາຊີບ, ວິຊາສະເພາະ ແລະ ຜູ້ທີ່ເຮັດວຽກຄົບ ເກົ້າ ເດືອນ ຜູ້ໃຊ້ແຮງງານຕ້ອງຈ່າຍເງິນເດືອນ ຫຼື ຄ່າແຮງງານ ສູງກວ່າຄ່າແຮງງານຂັ້ນຕໍ່າສຸດ. ຖ້ານໍາໃຊ້ຜູ້ອອກແຮງງານເຮັດວຽກທີ່ເປັນອັນຕະລາຍຕໍ່ສຸຂະພາບ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການດ້ານແຮງງານ ຜູ້ໃຊ້ແຮງງານຕ້ອງຈ່າຍເພີ່ມບໍ່ໃຫ້ຫຼຸດ 15% ຂອງຄ່າແຮງງານຂັ້ນຕໍ່າສຸດທີ່ກໍານົດໄວ້ໃນແຈ້ງການແນະນໍາສະບັບນີ້;

4. ໃຫ້ທຸກຫົວໜ່ວຍການຜະລິດ, ທຸລະກິດ ແລະ ການບໍລິການ ໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖ້າຫາກຫົວໜ່ວຍແຮງງານ ຫຼື ຜູ້ໃຊ້ແຮງງານໃດຫາກເບີກຈ່າຍຕໍ່າກວ່າ ຕ້ອງດໍາເນີນການປັບປຸງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມແຈ້ງການແນະນໍາສະບັບນີ້;

5. ໃຫ້ຄະນະກໍາມະການແຮງງານແຫ່ງຊາດ, ຄະນະກໍາມະການແຮງງານຂັ້ນແຂວງ, ກອງເລຂາຂອງຄະນະກໍາມະການແຮງງານແຫ່ງຊາດ ແລະ ກອງເລຂາຂອງຄະນະກໍາມະການແຮງງານຂັ້ນແຂວງ ນໍາໄປເຜີຍແຜ່, ແນະນໍາ ແລະ ຊຸກຍູ້ໃຫ້ຫົວໜ່ວຍແຮງງານ ປະຕິບັດແຈ້ງການແນະນໍາສະບັບນີ້ຢ່າງທົ່ວເຖິງ;

6. ໃຫ້ກົມຄຸ້ມຄອງແຮງງານ, ພະແນກແຮງງານ ແລະ ສະຫວັດດີການສັງຄົມຂັ້ນແຂວງ ແລະ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ໃນຂອບເຂດທົ່ວປະເທດ ຊຸກຍູ້ເຈົ້າໜ້າທີ່ກວດກາແຮງງານ ລົງຕິດຕາມ, ກວດກາການຈັດຕັ້ງປະຕິບັດແຈ້ງການແນະນໍາສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ;

7. ໃຫ້ສະຫະພັນກໍາມະບານທຸກຂັ້ນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊຸກຍູ້ຜູ້ອອກແຮງງານ, ຜູ້ຕາງໜ້າຜູ້ອອກແຮງງານ ຫຼື ໜ່ວຍກໍາມະບານ ປະຈໍາຢູ່ຫົວໜ່ວຍແຮງງານ ໃນການເຈລະຈາຕໍ່ລອງການເຮັດສັນຍາແຮງງານບຸກຄົນ ຫຼື ລວມໝູ່, ເພື່ອກໍານົດຄ່າແຮງງານ, ນະໂຍບາຍ ແລະ ສະຫວັດດີການອື່ນທີ່ເໝາະສົມຕາມເງື່ອນໄຂຕົວຈິງຂອງການດໍາເນີນທຸລະກິດທີ່ສາມາດໃຫ້ຜົນປະໂຫຍດທີ່ສູງກວ່າ;

8. ໃຫ້ສະພາການຄ້າ ແລະ ອຸດສາຫະກໍາທຸກຂັ້ນ ປຸກລະດົມ ແລະ ຊຸກຍູ້ ຜູ້ໃຊ້ແຮງງານ ປັບປຸງການເບີກຈ່າຍຄ່າແຮງງານຂັ້ນຕໍ່າສຸດ ໃຫ້ທັນກັບກໍານົດເວລາ ຕາມແຈ້ງການແນະນໍາສະບັບນີ້;

9. ໃຫ້ທຸກຫົວໜ່ວຍແຮງງານ ປະຕິບັດຕາມກົດໝາຍ ແລະ ລະບຽບການດ້ານປະກັນສັງຄົມ, ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານຢ່າງເຂັ້ມງວດ ໂດຍຮັບປະກັນໃຫ້ຜູ້ອອກແຮງງານທຸກຄົນໄດ້ເຂົ້າເປັນສະມາຊິກອົງການປະກັນສັງຄົມ ແລະ ໃຫ້ໄດ້ກວດສຸຂະພາບປະຈໍາປີ ຢູ່ສະຖານທີ່ກວດສຸຂະພາບແຮງງານທີ່ເຄື່ອນໄຫວຖືກຕ້ອງຕາມກົດໝາຍ;

10. ແຈ້ງການແນະນໍາສະບັບນີ້ ປ່ຽນແທນແຈ້ງການແນະນໍາສະບັບເລກທີ 1121/ຮສສ, ລົງວັນທີ 25 ເມສາ 2018 ແລະ ມີຜົນບັງຄັບໃຊ້ຢ່າງເປັນທາງການ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປຈົນກວ່າຈະມີການປ່ຽນແປງໃໝ່.

ລັດຖະມົນຕີ

ປະທານຄະນະກໍາມະການແຮງງານແຫ່ງຊາດ

ໃບຄໍາ ຂັດທິຍະ